## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 28 ກຸມພາ 2021 (02-28-2021)

---

### ເຂົ້າຮ່ວມວຽກງານຂອງພຣະເຈົ້າ.

ເມື່ອໃດວຽກງານເບິ່ງຄືວ່າເກີນຄວາມສາມາດທີ່ຈະເຮັດໃຫ້ສຳເຣັດໄດ້?

**ຈຸດສຳຄັນໃນບົດຮຽນ:** ບັນດາຜູ້ທີ່ເຊື່ອຕ້ອງເຂົ້າຮ່ວມວຽກງານຂອງພຣະເຈົ້າ ທັງພາຍໃນຄຣິສຕະຈັກແລະໃນໂລກ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ວຽກງານບາງຢ່າງເບິ່ງຄືວ່າຍາກກວ່າວຽກງານອື່ນໆ. ຂ້າພະເຈົ້າຄິດວ່າພວກເຮົາເຫັນດີວ່າບາງອາຊີບເຊັ່ນການຜ່າຕັດສມອງ ຫຼືການສອນວິຊາຟີສິກຂັ້ນສູງແມ່ນສູງກວ່າໝົດທຸກອັນ, ແຕ່ວ່າການເຮັດພັນທະກິດ (ຮັບໃຊ້ພຣະເຈົ້າ) ເດຈະຈັດຢູ່ໃນຂັ້ນໃດ? ບາງຄົນເຫັນວ່າການຮັບໃຊ້ພຣະເຈົ້າແມ່ນນຶ່ງໃນຈຳນວນວຽກງານທີ່<u>ຍາກທີ່ສຸດ</u>ໃນບັນດາວຽກງານທີ່ມີຢູ່ທຸກຫົນທຸກແຫ່ງ.

ໃນຄືນທີ່ຂ້າພະເຈົ້າໄດ້ຖືກສະຖາປະນາ, ຂ້າພະເຈົ້າໄດ້ນັ່ງຢູ່ຄົນດຽວທີ່ຂັ້ນໃດຫໍພັກຂອງຂ້າພະເຈົ້າ. ບາງສິ່ງບາງຢ່າງກ່ຽວກັບພິທີການສະຖາປະນາໂດຍທາງການໄດ້ເຮັດໃຫ້ຂ້າພະເຈົ້າເຂົ້າສູ່ຄວາມເປັນຈິງ. ຂ້າພະເຈົ້າຮູ້ວ່າວຽກງານຂອງສິດຍາພິບານເປັນວຽກທີ່ໃຫຍ່ເກີນກວ່າຄວາມສາມາດຂອງຊາຍໜຸ່ມເໝືອນຂ້າພະເຈົ້າ, ແຕ່ຂ້າພະເຈົ້າກໍ່ຍັງມີຄວາມຮູ້ສຶກງຽບສງົບແຕ່ລະມັດລະວັງໃນຄວາມໝັ້ນໃຈວ່າຂ້າພະເຈົ້າຈະສາມາດເຮັດໄດ້.

ມັນບໍ່ໄດ້ແມ່ນເພາະວ່າຂ້າພະເຈົ້າມີ<u>ການສຶກສາ</u>ສູງ, ຫຼືມີ<u>ປະສົບການຫຼາຍ</u>: ຂ້າພະເຈົ້າມີພຽງເລັກນ້ອຍທັງສອງຢ່າງ. ມັນບໍ່ໄດ້ແມ່ນວ່າຄວາມໝັ້ນໃຈຂອງຂ້າພະເຈົ້ານັ້ນມາຈາກການເບິ່ງໂລກໃນແງ່ດີ:*<u>ມັນມາຈາກການຮັບຮູ້ວ່າຂ້າພະເຈົ້າຈະບໍ່ໄດ້ເຮັດວຽກງານນີ້ໂດຍລຳພັງຕົນເອງ. ພຣະເຈົ້າຈະຊົງທຳງານຜ່ານຊີວິດຂອງຂ້າພະເຈົ້າ</u>.*

ທ່ານອາດບໍ່ເຄີຍຖືກສະຖາປະນາຢ່າງເປັນທາງການສຳລັບຕຳແໜ່ງ "ການຮັບໃຊ້"(ສິດຍາພິບານ), ແຕ່ວ່າທ່ານໄດ້ຊົງ<u>ຖືກຮຽກເອີ້ນ</u>ໃຫ້ມາຮັບໃຊ້. ບັນດາຜູ້ຕິດຕາມອົງພຣະຄຣິດ<u>**ທຸກຄົນ**</u>ໄດ້ຊົງຖືກຮຽກເອີ້ນໃຫ້ມາຮັບໃຊ້. ພວກເຮົາບໍ່ຈຳເປັນຕ້ອງຢ້ານກົວຕໍ່ວຽກງານນັ້ນຄວາມໝັ້ນໃຈທີ່ຂ້າພະເຈົ້າໄດ້ປະສົບມານັ້ນມັນເປັນຄວາມຈິງສຳລັບບັນດາຜູ້ທີ່ເຊື່ອທຸກໆຄົນຄື: ***<u>ພວກເຮົາໄດ້ຊົງຖືກຮຽກເອີ້ນໃຫ້ມາຮັບໃຊ້ ແລະພວກເຮົາບໍ່ໄດ້ປະຕິບັດໂດຍລຳພັງຕົນເອງ</u>.***

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2 ແລະ 3)

**ການສຶກສາພຣະຄັມພີ**

### 1. <u>ໂຢຮັນ 15:1-3</u>

*1 "ເຮົາເປັນເຄືອອະງຸ່ນອັນແທ້ຈິງພຣະບິດາຂອງເຮົາຊົງເປັນຜູ້ບົວລະບັດ. 2 ກິ່ງທຸກກິ່ງໃນເຮົາທີ່ບໍ່ເກີດຜົນພຣະອົງຊົງ-*
*ເສັຽແລະກິ່ງທຸກກິ່ງທີ່ເກີດຜົນພຣະອົງຊົງຕອນເພື່ອໃຫ້ເກີດຜົນຫລາຍຂຶ້ນ. 3 ບັດນີ້ທ່ານທັງຫຼາຍກໍຕອນແລ້ວດ້ວຍພຣະ*
*ທັມທີ່ເຮົາໄດ້ກ່າວຕໍ່ພວກທ່ານ.*

ໃນພຣະຄັມພີໂຢຮັນ, ພວກເຮົາໄດ້ເຫັນຄຳວ່າ "**ເຮົາເປັນ**" 7 ຄັ້ງທີ່ພຣະເຢຊູໄດ້ໃຊ້ກ່ຽວກັບພຣະອົງເອງດັ່ງນີ້:

- "ເຮົາເປັນອາຫານທິບແຫ່ງຊີວິດ" (ຢຮ 6:35)
- "ເຮົານີ້ແຫຼະ, ເປັນຄວາມສວ່າງຂອງໂລກ" (ຢຮ 8:12)
- "ເຮົານີ້ແຫຼະ, ເປັນປະຕູ" (ຢຮ 10:9)

- "ເຮົານີ້ແຫຼະ, ເປັນຜູ້ລ້ຽງແກະທີ່ດີ" (ຢຮ 10:11)
- "ເຮົານີ້ແຫຼະ, ເປັນເຫດໃຫ້ຄົນທັງປວງເປັນຂື້ນມາ" (ຢຮ 11:25-26)
- "ເຮົານີ້ແຫຼະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະ ເປັນຊີວິດ" (ຢຮ 14:6)
- "ເຮົາເປັນເຄືອອະງຸ່ນອັນແທ້ຈິງ" (ຢຮ 15:1)

ໃນການໃຊ້ໂຄງສ້າງ "**ເຮົາເປັນ**", ພຣະເຢຊູໄດ້ຊົງສະແດງໃຫ້ເຫັນພຣະອົງຕິດພັນກັບພຣະເຈົ້າ. ຊາວຢິວຂ້ອນຂ້າງຄຸ້ນເຄີຍກັບພຣະຄັມພີ ອົບພະຍົບ 3:14, ຊຶ່ງພຣະເຈົ້າໄດ້ຊົງສັ່ງໃຫ້ໂມເຊໃຫ້ບອກບັນດາຜູ້ທີ່ຮ້ອງຫາ "ເຮົາເປັນ" ໄດ້ສົ່ງເພິ່ນ (ໂມເຊ) ໃຫ້ນຳພາພວກເຂົາເຈົ້າ(ຊາວຢິວ)ອົບພະຍົບຫຼົບໜີຈາກເອຢິບ. "ເຮົາເປັນ" ແມ່ນແກ່ນແທ້ຂອງພຣະນາມພຣະເຢໂຮວາ, ຊຶ່ງເປັນພຣະນາມທີ່ສະແດງເຖິງຄວາມສັມພັນທາງພັນທະສັນຍາຂອງພຣະເຈົ້າກັບຊາວຢິວ."**ເຮົາເປັນ**" 7 ຄັ້ງໃນພຣະຄັມພີໂຢຮັນຊີ້ໃຫ້ເຫັນພຣະເຢຊູກັບພຣະເຈົ້າ: ພຣະອົງຜູ້ໄດ້ຊົງສົ່ງໂມເຊໃຫ້ໄປປະຕິບັດພາຣະກິດຂອງພຣະອົງ (ອພຍ 3:10), ພຣະອົງຜູ້ໄດ້ຊົງສົ່ງພຣະເຢຊູ (ຢຮ 17:3), ພຣະອົງຜູ້ຈະຊົງສົ່ງພຣະວິນຍານບໍຣິສຸດ (ຢຮ 15:26), ແລະພຣະອົງຜູ້ໄດ້ຊົງສົ່ງພວກເຮົາອອກໄປ (ຢຮ 20:21). ເມື່ອພຣະເຢຊູຊົງກ່າວວ່າ "ເຮົາເປັນເຄືອອະງຸ່ນອັນແທ້ຈິງ," ພຣະອົງໄດ້ໃຫ້ສັນຍານວ່າພຣະອົງໄດ້ຊົງກະທຳໃຫ້ສຳເຣັດໃນຈຸດປະສົງທີ່ຊົນຊາດອິສຣາເອນໄດ້ລົ້ມເຫຼວ: ຄືເປັນເຄືອອະງຸ່ນທີ່ບໍ່ເກີດດອກອອກຜົນ. ໃນທາງກົງກັນຂ້າມ, ພຣະເຢຊູຊົງເປັນເຄືອອະງຸ່ນອັນແທ້ຈິງ-ເຄືອອະງຸ່ນທີ່ໄດ້ເກີດດອກອອກຜົນ. ເຖິງຢ່າງໃດກໍຕາມ, ພຣະອົງບໍ່ໄດ້ຊົງເຮັດໂດຍລຳພັງພຣະອົງເອງ. ພຣະອົງຊົງຜະລິດຜົນນັ້ນຜ່ານກິ່ງກ້ານສາຂາ: ຜ່ານທາງບັນດາຜູ້ເຊື່ອ (1 ກຣທ 3:9), ຕາມພຣະປະສົງຂອງພຣະອົງ (ອຟຊ 2:10). ພຣະບິດາຊົງເປັນຜູ້ບົວລະບັດ(ຊາວສວນ)ຊຶ່ງມີໜ້າທີ່ ລິແລະຕອນກິ່ງອະງຸ່ນເພື່ອໃຫ້ກິ່ງກ້ານສາຂານັ້ນຜະລິດຜົນໃຫ້ຫຼາຍຂື້ນ (ກິ່ງອະງຸ່ນເປັນການປຽບທຽບກັບພວກເຮົາ). ຖ້າ(ເງື່ອນໄຂ)ພຣະບິດາຊົງເຫັນກິ່ງໃດທີ່ບໍ່ເກີດດອກອອກຜົນ, ພຣະອົງຈະຊົງລິ(ຕັດ)ຖິ້ມໄປຈາກເຄືອອະງຸ່ນ. ແມ່ນໝາກຜົນປະເພດໃດທີ່ພວກເຮົາຜະລິດອອກມາ?

- ບາງຄົນປຽບທຽບໝາກຜົນໃສ່ກັບການປະກາດຂ່າວປະເສີດທີ່ມີຄວາມສຳເລັດ, ໝາຍຄວາມວ່າໄດ້<u>ນຳຄົນມາຮູ້ຈັກພຣະເຢຊູ</u>ຫຼາຍປານໃດແລ້ວ (ປະຣິມານ).
- ບາງຄົນຕີຄວາມໝາຍໝາກຜົນໃສ່ກິຈການຂອງ<u>ການຮັບໃຊ້</u>, ໝາຍຄວາມວ່າແມ່ນພັນທະກິດທີ່ກຳລັງເຮັດຢູ່ໃນພຣະນາມຂອງອົງພຣະເຢຊູ.
- ບາງຄົນຕີຄວາມໝາຍໝາກຜົນແມ່ນ<u>ການເຕີບໂຕສ່ວນບຸກຄົນ</u>, ຄືພຣະລັກສະນະຂອງພຣະເຢຊູທີ່ພຣະເຈົ້າຊົງລໍ່ຫຼອມໃນຕົວຂອງຕົນ.

***ດັ່ງນັ້ນແມ່ນແນວໃດ?***<u>ຄຳຕອບ</u>:ພວກເຮົາເຫັນທັງ 3 ກໍລະນີຢູ່ໃນພຣະຄັມພີ: ນຳຄົນມາຮູ້ຈັກພຣະເຢຊູ (ຢຮ 4:36); ບົວລະບັດຮັບໃຊ້ໃນພຣະນາມພຣະເຢຊູ (ມທ 7:16-20); ແລະ ການເຕີບໂຕສ່ວນບຸກຄົນ (ຄລຕ 5:22-23).

| ແມ່ນຫຍັງຄືບາງສິ່ງບາງຢ່າງທີ່ພຣະເຈົ້າມີພຣະປະສົງໃຫ້ພວກເຮົາຜະລິດຕະຜົນ? |
|---|

## 2. <u>ໂຢຮັນ 15:4-5</u>

*4 ຈົ່ງເຂົ້າສນິດຢູ່ໃນເຮົາແລະເຮົາເຂົ້າສນິດຢູ່ໃນພວກທ່ານກິ່ງຈະເກີດຜົນເອງບໍ່ໄດ້ນອກຈາກຈະຕິດຢູ່ກັບເຄືອສັນໃດ-ທ່ານທັງຫຼາຍກໍຈະເກີດຜົນບໍ່ໄດ້ນອກຈາກຈະເຂົ້າສນິດຢູ່ໃນເຮົາສັນນັ້ນ. 5 ເຮົາເປັນເຄືອອະງຸ່ນທ່ານ ທັງຫຼາຍເປັນກິ່ງ*

*ຜູ້ທີ່ເຂົ້າສນິດຢູ່ໃນເຮົາແລະເຮົາເຂົ້າສນິດຢູ່ໃນຜູ້ນັ້ນແມ່ນຜູ້ນັ້ນແຫຼະ,ຈະເກີດຜົນຫຼາຍເພາະ ຖ້າແຍກຈາກເຮົາແລ້ວ ພວກທ່ານບໍ່ອາດເຮັດສິ່ງໃດໄດ້.*

**ບໍ່ເກີດແຫ່ງຊີວິດແມ່ນເຄືອອະງຸ່ນ.** ມີທາງດຽວທີ່ກິ່ງກ້ານສາຂາຈະເກີດດອກອອກຜົນໄດ້ແມ່ນຕິດສນິດຢູ່ກັບເຄືອ. ໝາກຜົນບໍ່ໄດ້ເກີດຈາກເຄືອໂດຍກົງ, ມັນເກີດຈາກກິ່ງຊຶ່ງຕິດຢູ່ກັບເຄືອ. ພຣະເຈົ້າຊົງທຳງານຜ່ານທາງພວກເຮົາເພື່ອໃຫ້ພຣະປະສົງຂອງພຣະອົງສຳເລັດຢູ່ໃນໂລກນີ້. ພຣະເຢຊູໄດ້ຊົງເລືອກປະຕິບັດພຣະຣາຊກິດຜ່ານທາງພວກເຮົາເພື່ອໃຫ້ເກີດໝາກຜົນຂອງພຣະອົງ. ພຣະເຈົ້າຊົງໃຊ້ພວກເຮົາ, ຖ້າຫາກພວກເຮົາຕິດສນິດຢູ່ກັບພຣະອົງເທົ່ານັ້ນ. ພຣະເຢຊູຊົງເວົ້າກັບບັນດາສາວົກຂອງພຣະອົງໂດຍກົງວ່າພວກເຂົາເຈົ້າ**ຕ້ອງ**ຕິດສນິດຢູ່ໃນພຣະອົງ. ບໍ່ຄືກັນກັບກິ່ງທີ່ຕິດຢູ່ກັບເຄືອ, ບັນດາຜູ້ເຊື່ອມີທາງເລືອກທີ່ຈະຕິດຢູ່ **ຫຼື** ບໍ່ຕິດຢູ່ກັບອົງພຣະຄຣິດ. ກິ່ງບໍ່ມີຄວາມປາຖນາແຕ່ຜູ້ຄົນມີ (ຄວາມປາຖນາ). ພຣະເຢຊູຊົງບັນຊາ (ສັ່ງ) ໃຫ້ພວກເຮົາທັງຫຼາຍຕິດສນິດຢູ່ກັບພຣະອົງ. “ຕິດສນິດ” ໝາຍຄວາມວ່າການສະຖິດຫຼືອາສັຍຢູ່ໃນບາງສິ່ງບາງຢ່າງ, ແລະມັນມີແນວຄວາມຄິດຂອງການຢູ່ອາສັຍສ່ວນຕົວ, ທີ່ພັກພາອາສັຍທີ່ສນິດສນົມ. ພຣະເຢຊູໄດ້ຊົງເນັ້ນໜັກວ່າບັນດາຜູ້ຕິດຕາມພຣະອົງຈຳເປັນຕ້ອງຕິດສນິດຢູ່ກັບພຣະອົງ, ແລະພຣະອົງຊົງຕິດສນິດຢູ່ກັບພວກເຂົາເຈົ້າ. ມັນແມ່ນສະພາບການທີ່ມີຄວາມສນິດສນົມຊຶ່ງກັນແລະກັນ. ຄວາມຊັບຊ້ອນແລະຄວາມສັມພັນທະພາບລະຫວ່າງພຣະເຢຊູແລະຜູ້ຕິດຕາມຂອງພຣະອົງແມ່ນຍາກທີ່ພັນລະນາແລະເປັນໄປບໍ່ໄດ້ທີ່ຈະເວົ້າເກີນໄປ! ພຣະເຢຊູມີພຣະປະສົງໃຫ້ຜູ້ຕິດຕາມພຣະອົງໃຫ້ຕິດສນິດຢູ່ກັບ ພຣະອົງ**ໃກ້ເທົ່າທີ່ພຣະອົງຊົງ**ຕິດສນິດຢູ່ກັບພວກເຂົາເຈົ້າ. **ໃກ້ຊໍ່ານັ້ນລະ!** ອົງພຣະເຢຊູອະທິບາຍໂດຍແຈ່ມແຈ້ງວ່າ: ພວກເຮົາຈະບໍ່ເກີດດອກອອກຜົນໂດຍປາສຈາກພຣະອົງ, ແລະ ພວກເຮົາຈະເກີດດອກອອກຜົນຮ່ວມກັບພຣະອົງ.

| ການຕິດສນິດຢູ່ກັບພຣະຄຣິດໃນແຕ່ລະວັນນັ້ນ ແມ່ນເປັນລັກສະນະແບບໃດ? |
|---|

## 3. ໂຢຮັນ 15:6-8

6 *ຖ້າຜູ້ໃດບໍ່ເຂົ້າສນິດຢູ່ໃນເຮົາຜູ້ນັ້ນກໍຕ້ອງຖືກຕັດຖິ້ມເສັຽເໝືອນກິ່ງແລ້ວກໍຫ່ຽວແຫ້ງໄປແລະຖືກເກັບເອົາໄປເຜົາໄຟ*
*ເສັຽ.* 7 *ຖ້າທ່ານທັງຫຼາຍເຂົ້າສນິດຢູ່ໃນເຮົາແລະຖ້ອຍຄຳຂອງເຮົາຝັງຢູ່ໃນທ່ານແລ້ວພວກທ່ານຈະປາຖນາສິ່ງໃດຈົ່ງຂໍ*
*ແລ້ວ ສິ່ງນັ້ນຈະເກີດມີແກ່ພວກທ່ານ.* 8 *ໃນການນີ້ແຫຼະ, ພຣະບິດາຂອງເຮົາໄດ້ຊົງຮັບກຽດຕິຍົດຄືເມື່ອພວກທ່ານເກີດ*
*ຜົນຫຼາຍພວກທ່ານຈຶ່ງເກີດເປັນສາວົກຂອງເຮົາ.*

ທັນທີທັນໃດທີ່ກິ່ງໄດ້ແຍກອອກຈາກເຄືອ, ມັນກໍໄຮ້ປະໂຍດ-ແຫ່ວແຫ້ງ ແລະຕາຍໄປແລ້ວເຈົ້າຂອງສວນກໍເກັບເອົາໄປເຜົາໄຟຖິ້ມເສັຽ. ກິ່ງທີ່ບໍ່ຕິດເຄືອບໍ່ມີປໂຍດຫຍັງເລີຍ. ເພງສັຣເສີນບົດທີ່ 1 ກໍມີຄຳອຸປມາຄ້າຍຄືກັນ: *“ຄົນຜູ້ນີ້ເປັນຄືຕົ້ນໄມ້ທີ່ປູກໃກ້ລຳນໍ້າ ຊຶ່ງມີໃບຂຽວສົດງົດງາມແລະເກີດໝາກຕາມລະດູ ລາວກະທຳທຸກສິ່ງກໍສຳເລັດຜົນ. ແຕ່ວ່າຄົນຊົ່ວບໍ່ເປັນຢ່າງນີ້ເລີຍ ລາວເປັນເໝືອນຂີ້ແກບທີ່ລົມພັດປິວໄປ.”* (ພສສ 1:3-4) ແທນທີ່ຈະດຳເນີນຊີວິດດ້ວຍຄວາມລົ້ມເຫຼວ, ບັນດາຜູ້ທີ່ຕິດສນິດຢູ່ກັບອົງພຣະເຢຊູໄດ້ນຳພຣະສະງ່າຣາສີມາສູ່ພຣະເຈົ້າ. ພວກເຮົາເກີດດອກອອກຜົນເພື່ອວ່າພຣະເຈົ້າຈະຊົງໄດ້ຮັບພຣະສະງ່າຣາສີ. ພຣະເຈົ້າເປັນຜູ້ຊົງໄດ້ຮັບພຣະສະງ່າຣາສີ; ບໍ່ໄດ້ແມ່ນພວກເຮົາ. ມັນແມ່ນ: ພຣະສະງ່າຣາສີ, ພຣະອຳນາດ, ພຣະກຽດຕິຍົດຂອງພຣະອົງ-ບໍ່ໄດ້ແມ່ນຂອງພວກເຮົາ. ໝາກຜົນໃດກໍຕາມທີ່ອອກຈາກພວກເຮົາແມ່ນມາຈາກ ການທີ່ພວກເຮົາໄດ້ຕິດສນິດຢູ່ກັບອົງພຣະເຢຊູ, ດັ່ງນີ້ແຫຼະພຣະສະງ່າຣາສີຈຶ່ງເປັນຂອງພຣະອົງ. ການຕິດສນິດຢູ່ໃນພຣະຄຣິດບໍ່ໄດ້ຮັບປະກັນວ່າທ່ານຈະປະສົບເປົ້າໝາຍທຸກຢ່າງຂອງຊີວິດ ຫຼື ປະສົບຄວາມສຳເລັດ **ໃນທາງຄວາມໝາຍຝ່າຍໂລກ**. ໝາກຜົນທີ່ພວກເຮົາຜະລິດໂດຍພຣະອຳນາດຂອງ

ພຣະອົງ<u>ແມ່ນໝາກຜົນໃນໜົນທາງທີ່ຖວາຍພຣະສະງ່າຣາສີແດ່ອົງພຣະເຈົ້າ</u>. ພຣະເຈົ້າໄດ້ຊົງຮັບພຣະສະງ່າຣາສີ, ບໍ່ແມ່ນພຽງແຕ່ດ້ວຍເຫດວ່າໝາກຜົນໄດ້ເກີດອອກມາ, ແຕ່ເພາະດ້ວຍເຫດວ່າກິ່ງກ້ານສາຂາ(ໝາຍເຖິງພວກເຮົາຜູ້ຕິດຕາມອົງພຣະຄຣິດ)ໄດ້ຂຶ້ນກັບ (ຕິດສະນິດ) ກັບພຣະອົງ. ໃນເມື່ອພວກເຮົາຜະລິດໝາກຜົນຝ່າຍຈິດວິນຍານ, ພວກເຮົາໄດ້ຖວາຍພຣະກຽດ(ພຣະສະງ່າຣາສີ)ແດ່ພຣະເຈົ້າແລະ ພວກເຮົາໄດ້ພິສູດວ່າພວກເຮົາແມ່ນສາວົກຂອງອົງພຣະເຢຊູ. ໃນເມື່ອພວກເຮົາດຳເນີນຊີວິດ<u>**ຢູ່ໃນ**</u>ພຣະຄຣິດ ແລະ ດຳເນີນຊີວິດ<u>**ເພື່ອ**</u>ພຣະຄຣິດ, ພວກເຮົາຈະເກີດດອກອອກຜົນ-ແລະ<u>**ພຣະເຈົ້າຈະຊົງໄດ້ຮັບພຣະສະງ່າຣາສີ**</u>.

| |
|---|
| ແມ່ນຫຍັງຄືຄວາມສຳພັນລະຫວ່າງ: ຕິດສນິດຢູ່ກັບພຣະຄຣິດແລະຄຳອະທິຖານໄດ້ຕອບແລ້ວ? |

| |
|---|
| ເປັນຫຍັງມັນຈຶ່ງສຳຄັນແທ້ໆ ທີ່ພວກເຮົາຈຳເປັນຕ້ອງເກີດດອກອອກຜົນ? |

## ນຳໃຊ້ໃນຊີວິດ:

ທ່ານຈະເຂົ້າຮ່ວມກັບພຣະເຈົ້າໃນວຽກງານຂອງພຣະອົງໄດ້ແນວໃດ? ຈົ່ງໃຊ້ນີ້ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງຕິດສນິດຢູ່ກັບພຣະຄຣິດ.** ຈົ່ງຍອມຈຳນົນແຜນການຂອງທ່ານແລະເລືອກເອົາການຕິດສນິດຢູ່ກັບພຣະຄຣິດ, ດຳເນີນຊີວິດຢູ່ໃນພຣະອົງ ແລະຢູ່ໃນພຣະອຳນາດຂອງພຣະອົງ. ຈົ່ງອະທິຖານເພື່ອເປີດຕາເປີດໃຈໃຫ້ທ່ານໄດ້ເຫັນໂອກາດແຫ່ງພັນທະກິດ ທີ່ພຣະອົງໄດ້ຊົງມອບໄວ້ຕໍ່ໜ້າຂອງພວກທ່ານ.
- **ຈົ່ງໃຫ້ຄຳແນະນຳປຶກສາ.** ຖ້າຫາກທ່ານໄດ້ພົວພັນຢູ່ກັບພັນທະກິດຂອງພຣະເຈົ້າແລ້ວ, ຈົ່ງສມັກທີ່ຈະໃຫ້ຄຳແນະນຳປຶກສາແກ່ໃຜຜູ້ນຶ່ງທີ່ບໍ່ທັນໄດ້ຮ່ວມໃນພັນທະກິດນັ້ນ. ຈົ່ງແນະນຳພວກເຂົາເຈົ້າກ່ຽວກັບກົດລະບຽບວິນັຍກ່ຽວກັບ <u>*ການຕິດສນິດຢູ່ກັບພຣະຄຣິດ*</u> ແລະຊ່ວຍພວກເພິ່ນໃຫ້ຄົ້ນພົບວິທີການເຂົ້າຮ່ວມເຊັ່ນດຽວກັນ.
- **ຈົ່ງນຳພາ.** ຖ້າພຣະເຈົ້າໄດ້ຊົງຮຽກເອີ້ນທ່ານໃຫ້ຮັບໃຊ້ໃນພັນທະກິດແຫ່ງການເປັນຜູ້ນຳພາ, <u>ຈົ່ງຮັບເອົາການຊົງຮຽກເອີ້ນນັ້ນ</u>. ຈົ່ງສົນທະນາກັບສິດຍາພິບານຂອງທ່ານກ່ຽວກັບການຊົງຮຽກເອີ້ນນັ້ນ ແລະບາດກ້າວຕໍ່ໄປ.

ພາຍໃນລະຍະຫຼາຍປີຂອງການຮັບໃຊ້, ມີຫຼາຍສິ່ງຫຼາຍຢ່າງໄດ້ປ່ຽນແປງໄປ-ແຕ່ມີສິ່ງນຶ່ງຍັງຄົງເໝືອນເດີມ: <u>ຂ້າພະເຈົ້າຍັງຂຶ້ນຢູ່ກັບພຣະເຈົ້າຢ່າງເຕັມກຳນົດໃນການຮັບໃຊ້ພຣະເຈົ້າຜ່ານທາງຂ້າພະເຈົ້າ</u>. ຂ້າພະເຈົ້າສາມາດພຽງແຕ່ຮັບໃຊ້ໃນພັນທະກິດທີ່ພຣະອົງໄດ້ຊົງຮຽກເອີ້ນໃຫ້ຂ້າພະເຈົ້າປະຕິບັດແລະເຮັດໃຫ້ເກີດດອກອອກຜົນ<u>**ຖ້າຫາກວ່າຂ້າພະເຈົ້າຕິດສນິດສນົມຢູ່ກັບພຣະຄຣິດ**</u>**.**

### ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us/ ໂດຍ SSK